ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www. Laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ສັບບທີ ໔໐໙ ປພຖຊ/ ໐໔໐໗໐໗**

# ບົດຄວາມ

## ພັກຣັດ ຍອມ ເລົ່າທຸກ

ອົງການຈັດຕັ້ງສາກົນ ແລະບັນດາປະເທດ ທີ່ມີສາຍສັມພັນທາງການທູດ ແລະ ເຄີຍໃຫ້ການຊ່ວຍເຫລືອລາວ ໄດ້ບີບຣັດໃຫ້ພັກຣັດ ຕ້ອງອອກມາຍອມຮັບ ຄວາມບົກພ່ອງ ໃນການ ບໍຣິຫານປະເທດຊາດຂອງຕົນ ກ່ຽວກັບບັນຫາຕ່າງໆ ທີ່ກ່ຽວພັນ ກັບການຮ່ວມມືສາກົນ ເປັນຕົ້ນ : ການລະເມີດຕໍ່ສິດທິເສຣີພາບ ຂອງປະຊາຊົນ, ການສໍ້ຣາດບັງຫລວງ, ການຄ້າມະນຸດ, ຄ້າຢາເສບຕິດ, ທຳລາຍສະພາບແວດລ້ອມ ແລະບໍ່ເອົາໃຈໃສ ແກ້ໄຂເດັກເຍົາວະຊົນ ທີ່ມີບັນຫາ.

ໃນທີ່ສຸດ, ພັກຣັດ ກໍຍອມຮັບຄວາມເປັນຈິງ ດັ່ງບາງຕົວຢ່າງ ຕໍ່ໄປນີ້:

- ທ່ານ ສົມດີ ດວງດີ ຣັຖມົນຕຣີກະຊວງການຄັງ ຍອມຮັບວ່າ " ພັກຣັດຂາດດູນ ໃນປີ 2006-2007 ນີ້ ເຖິງ 2,000 ລ້ານກີບ ຍ້ອນມີການສໍ້ຣາດບັງຫລວງ ໃນກົງຈັກບໍຣິຫານຂອງຣັຖບານ ທັງພາສີ ທັງລາຍຮັບ ແລະລາຍຈ່າຍ ທຸກປະເພດ.
- ທ່ານ ທອງວັນ ແສງອາພອນ ຣັຖມົນຕຣີ ປ້ອງກັນຄວາມສງົບ ກໍອອກມາຍອມຮັບວ່າ " ການສໍ້ຣາດບັງຫລວງຂອງຄນະພັກຣັດ ເປັນພັຍຂົ່ມຂູ່ຕໍ່ແຜນພັທນາເສຖກິດແລະສັງຄົມຢ່າງໃຫຍ່ຫລວງ ຂອງໜ້າກອງປະຊຸມ ຣະລຶກວັນຄົບຮອບ 4 ປີ ແຫ່ງການເຊັນສັນຍາ ຕ້ານການສໍ້ຣາດບັງຫລວງ ຂອງ ສະຫະປະຊາຊາດ". ທ່ານ ຍັງໄດ້ຮຽກຮ້ອງ ໃຫ້ຣັຖບານ ປະຕິບັດກົດໝາຍ ຕ້ານການສໍ້ຣາດບັງຫລວງນີ້ ຢ່າງເຄັ່ງຄັດ... ນຳເອົາຜູ້ສໍ້ຣາດ ມາລົງໂທດ ຂັ້ນເດັດຂາດ ເພື່ອເຮັດໃຫ້ການຄຸ້ມຄອງຣັດ ຄຸ້ມຄອງສັງຄົມ ຕາມກົດໝາຍນັ້ນ ມີຄວາມສັກສິດຂື້ນ.
- ທ່ານ ພົນໂທ ດວງໃຈ ພິຈິດ ກໍອອກມາຍອມຮັບວ່າ " ການຄ້າມະນຸດ ແມ່ນ ອາສຍາກັມ ທີ່ທຳລາຍກຽດ ແລະສັກສີ ຂອງມະນຸດ...ແຕ່ຍັງມີຫລາຍກໍຣະນີ ຜູ້ກະທຳຜິດ
ຍັງບໍ່ໄດ້ຮັບການລົງໂທດ
ຂັ້ນເດັດຂາດ, ຂອງໜ້າກອງປະຊຸມ ຕ້ານການຄ້າແຮງງານຍິງ ແລະເດັກນ້ອຍ".

ກ່ຽວກັບການລະເມີດ ຕໍ່ສິດທິມະນຸດ, ເດັ່ນທີ່ສຸດ ກໍຄື ທ່ານ ບົວສອນ ບຸບຜາວັນ ໄດ້ໃຫ້

ສຳພາດ ຢູ່ປະເທດ ສິງກະໂປ ວ່າ " ເມືອງລາວ ບໍ່ມີປະຊາທິປະໄຕ, ມີແຕ່ ສັງຄົມນິຍົມ ຄອມມິວນິສ". ລາວ, ບໍ່ມີແຜນພັທນາ ປະຊາທິປະໄຕ. - ນອກຈາກນີ້ແລ້ວ, ໃນວາຣະສານ Parade.com ກໍລົງຂ່າວວ່າ " ທ່ານ ຈູມມະລີ ໄຊຍະສອນ ປະທານປະເທດ ເປັນຜເດັດການໂຫດຮ້າຍປ່າເຖື່ອນ ຜູ້ທີ 16 ທີ່ມີຢູ່ໃນໂລກນີ້". ທ່ານເປັນຄົນ ຊາດວິສັຍທັດ, ບໍ່ເບິ່ງກ້ວາງເຫັນໄກ, ແບ່ງແຍກປະຊາຊົນລາວ, ຖືຄຳພີຕາຍຕົວ, ເຄີຍຜເດັດການຢູ່ຢ່າງໃດ ກໍຜເດັດການຢູ່ຢ່າງນັ້ນ!, ຈຶ່ງຖືກສະຫາຍວຽດນາມ ແລະສະຫາຍ ກຳປູເຈັຽ ປ່ອຍປະໃຫ້ເປັນ ຜເດັດການຄ້າງໂລກ ຢູ່ຜູ້ດຽວ.

ຄນະຣັຖບານ ກໍຂາດຄຸນສົມບັດ...ຕົວະຫລ່າຍໄປທົ່ວທິບ, ໂດຍສະເພາະ ທ່ານ ທອງລຸນ ສີສຸລິດ ຣັຖມົນຕຣີ ກະຊວງການຕ່າງປະເທດ ໄດ້ສເນີ ຢູ່ກອງປະຊຸມເອຊຽນ, ຕົວະວ່າ " ເມືອງລາວ ປອດການປູກຝິ່ນໝົດແລ້ວ!" ແຕ່ເມື່ອທາງອົງການສາກົນກວດພົບ ເຫັນວ່າ ການປູກຝິ່ນຢູ່ເມືອງ
ລາວ ຍັງມີເນື້ອທີ່ ຫລາຍກວ່າ 1,000 ha. ພັກຣັດ ຊໍ້າພັດຫັນເຫຄວາມຄິດ ຂອງຄົນໄປທາງອື່ນ ດ້ວຍວິທີສເນີ ຂໍການຊ່ວຍເຫລືອຕື່ມອີກເຖິງ 44 ລ້ານດອນລາສະຫະຣັດ ເພື່ອປາບປາມ ບໍ່ໃຫ້ການປູກຝິ່ນນັ້ນ ກັບຄືນມາອີກ. ສ່ວນ ທ່ານ ບົວສອນ ບຸບຜາວັນ ບ້ອຍວ່າ ໄດ້ຂຶ້ນເປັນນາຍົກ ກໍຟ້າວແລ່ນໄປຂາຍຕົວ ໃຫ້ ຍີ່ປຸ່ນ ເພື່ອລ້າປາວານ, ຊຶ່ງກຸ່ມປົກປ້ອງປາວານ Australia ກຳລັງກວດລ້າງກັນຢູ່ ໃນປະຈຸບັນນີ້, ທັງໆທີ່ປະຊາຊົນລາວ ບໍ່ຮູ້ຮອດວ່າ ປາວານນັ້ນໃຫຍ່ນ້ອຍຫລາຍປານໃດ... ຈະຕາງໜ້າປະຊາຊົນລາວ ໄປລ້າປະວານ ໄດ້ຢ່າງໃດ!

ການອັດສະຖານທູດ ຂອງ Sweden ໄດ້ເຕືອນໃຫ້ ພັກຣັດ ສປປລາວ. ຮູ້ວ່າ " ຖ້າຍັງເມີນເສີຍ ຕໍ່ການແກ້ໄຂບັນຫາລາວ ຕາມແນວທາງສັນຕິວິທີແລ້ວ, ພັກຣັດ ກໍຈະໄດ້ພົບກັບການທ້າທາຍ ຈາກປະເທດອື່ນໆ ທີ່ຕ້ອງອັດປະຕູສະຖານທູດ ຂອງຕົນ ອອກໄປຕາມໆກັນ ຢ່າງບໍ່ຕ້ອງສົງສັຍ!

ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ເຫັນວ່າ " ການທີ່ອົງການຈັດຕັ້ງສາກົນ ບີບຣັດ ໃຫ້ພັກຣັດ ອອກມາເຜີຍແບຄວາມຈິງຕໍ່ຊາວໂລກຄືດັ່ງນີ້, ກໍເພື່ອ ໃຫ້ພັກຣັດ ໄດ້ທົບທວນຄືນ ເຖິງຄວາມບົກຜ່ອງ ໃນການບໍຣິຫານປະເທດຊາດ ຜ່ານລະຍະ 31 ປີຄອງອຳນາດ, ໃຫ້ທົບທວນຄືນ ເຖິງຂອບເຂດຄວາມສາມາດ ຂອງພັກຣັດ ແລະ ໃຫ້ທົບທວນຄືນເຖິງ ຜົນສະທ້ອນແນວບໍ່ດີ ຂອງຣະບອບການ ປົກຄອງປະເທດຊາດ ທີ່ລ້າສມັຍ, ບໍ່ສອດຄ່ອງກັບຍຸກໂລກາວິວັດ. ຈາກນັ້ນ, ກໍໃຫ້ພັກຣັດ ສແດງຄວາມກ້າຫານ, ປ່ຽນຣັຖບານຂອງຕົນໂດຍໄວກ່ອນທີ່ ພັກຣັດ ຈະໝົດໂອກາດໄປ.

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**
**ກອງວິຈັຍ**
**ວັນທີ ໗ ກຸມພາ ໒໐໐໗.**